Special Economic Zone, Lecture seventh: Development by government entities

1. **ການພັດທະນາເຂດເສດຖະກິດພິເສດທີ່ລັດເປັນຜູ້ລົງທຶນ.**

ການລົງທຶນພັດທະນາ ເຂດເສດຖະກິດພິເສດ ທີ່ລັດເປັນຜູ້ລົງທຶນນັ້ນ ແມ່ນພັດທະນາພື້ນຖານໂຄງລ່າງ ແລະ ສິ່ງສາທາລະນຸປະໂພກຕ່າງໆ ທັງໝົດໃນເຂດ ເພື່ອອຳນວຍຄວາມສະດວກດຶງດູດການລົງທຶນລາຍຍ່ອຍເຂົ້າມາລົງທຶນໃນ ເຂດເສດຖະກິດພິເສດ ແລະ ຄຸ້ມຄອງບໍລິຫານດ້ວຍຄະນະບໍລິຫານທີ່ມາຈາກພາກສ່ວນລັດຮ້ອຍສ່ວນຮ້ອຍ.

ການພັດທະນາເຂດເສດຖະກິດພິເສດ ຂອງພາກລັດແມ່ນບົນພື້ນຖານ ແຜນການພັດທະນາ ເສດຖະກິດ-ສັງຄົມແຫ່ງຊາດ ໃນແຕ່ລະໄລຍະ, ສອດຄ່ອງກັບຄວາມສາມາດ ແລະ ເງື່ອນໄຂຕົວຈິງຂອງປະເທດ, ພັດທະນາແບບມີຈຸດສຸມ ແລະ ມີເປົ້າໝາຍ, ຫັນຊັບສິນທີ່ດິນເປັນທຶນ, ຮັບປະກັນຄຸນນະພາບ, ປະສິດທິພາບ, ຄວາມສາມາດແຂ່ງຂັນ, ເຊື່ອງໂຍງເຂົ້າກັບເສດຖະກິດພາກພື້ນ ແລະ ສາກົນ;

ພັດທະນາ ເຂດເສດຖະກິດພິເສດ ເລີ່ມຈາກຈຳນວນໜ້ອຍ ແຕ່ມີປະສິດທິຜົນສູງ ທາງດ້ານເສດຖະກິດ-ສັງຄົມ, ເລີ່ມຈາກເຂດທີ່ມີທ່າແຮງເປັນຫົວຈັກຂອງການພັດທະນາ ແລ້ວຈຶ່ງຂະຫຍາຍດ້ານປະລິມານໄປເທື່ອລະກ້າວຢ່າງໜັກແໜ້ນ; ການພັດທະນາເຂດເສດຖະກິດພິເສດຢູ່ ສປປລາວ ແມ່ນອີງໃສ່ຕາມ 03 ເປົ້າໝາຍຫຼັກ ຄື:

1) ກຳນົດເຂດທີ່ມີທີ່ຕັ້ງ ແລະ ເງື່ອນໄຂເໝາະສົມທາງດ້ານເຂດເສດຖະກິດ ໃຫ້ເປັນເຂດເສດຖະກິດສະເພາະ, ເປັນສູນກາງດຶງດູງການລົງທຶນ, ການຕໍາຄ້າ, ການບໍລິການ ແລະ ການທ່ອງທ່ຽວ(ທີ່ຕິດພັນກັບຮ່ອງຮອຍປະຫວັດສາດ ວັດທະນາທຳ ແລະ ອະລິຍະທຳທີ່ດີງາມຂອງຊາດ) ເພື່ອເຊື່ອເຂົ້າກັບເຂດເສດຖະກິດຂອງພາກພື້ນ. ຊຶ່ງເປົ້າໝາຍຕົ້ນຕໍຂອງການພັດທະນາເຂດເສດຖະກິດພິເສດຢູ່ເຂດນີ້ ແມ່ນແນໃສ່ຜົນປະໂຫຍດທາງດ້ານເສດຖະກິດ ແລະ ສ້າງເປັນຖານແຫຼ່ງລາຍຮັບເຂົ້າງົບປະມານແຫ່ງຊາດໃນອະນາຄົດ;
2) ກຳນົດທີ່ຕັ້ງ ແລະ ເງື່ອນໄຂທີ່ເໝາະສົມ ໃຫ້ເປັນເຂດອຸດສະຫະກຳປຸງແຕ່ງ ຕິດພັດກັບການຜະລິດກະສິກຳ, ຜະລິດເພື່ອສົ່ງອອກ, ນຳໃຊ້ເຕັກໂນໂລຊີສູງ ເພື່ອການຫັນເປັນອຸດສະຫະກຳ ແລະ ທັນສະໄໝເທື່ອລະກ້າວ;
3) ກຳນົດເຂດທີ່ທຸກຍາກ, ຫ່າງໄກຊອກຫຼີກ ແລະ ມີທີ່ຕັ້ງຍຸດທະສາດສຳຄັນ ໃຫ້ເປັນເຂດເສດຖະກິດພິເສດ ເພື່ອສົ່ງເສີມການພັດທະນາພື້ນຖານໂຄງລ່າງ, ສ້າງໃຫ້ເປັນຕົວເມືອງໃໝ່ທີ່ທັນສະໄໝຢູ່ຊົນນະບົດ, ພ້ອມທັງຍົກຊີວິດການເປັນຢູ່ຂອງປະຊາຊົນໃຫ້ສູງຂຶ້ນ ເພື່ອກ້າວໄປສູ່ການຫຼຸດພົ້ນອອກຈາກການດ້ອຍພັດທະນາເທື່ອລະກ້າວ. ການດຶງດູດການລົງທຶນເຂົ້າໃນເຂດນີ້ ອາດຈະພົບຄວາມຫຍຸ້ງຍາກ ແລະ ຜູ້ພັດທະນາອາດຈະບໍ່ໃຫ້ຄວາມສົນໃຈຫຼາຍເພາະປະສິດທິຜົນທາງດ້ານເສດຖະກິດບໍ່ສູງ. ດັ່ງນັ້ນ, ຕ້ອງມີນະໂຍບາຍ ສົ່ງເສີມພິເສດ ຖ້າທຽບໃສ່ ສອງເຂດທີ່ກ່າວມາຂ້າງເທິງນັ້ນ.

ແນວໃດກໍຕາມ, ການພັດທະນານັ້ນກໍ່ຕ້ອງຕິດພັນກັບ ວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ, ປົກປັກຮັກສາສິ່ງແວດລ້ອມທຳມະຊາດ, ວັດທະນາທຳ ແລະ ຮີດຄອງປະເພນີອັນດີງາມຂອງປະຊາຊົນບັນດາເຜົ່າ;

ການພັດທະນາເຂດເສດຖະກິດພິເສດຕິດພັນກັບ ການພັດທະນາເສດຖະກິດ-ສັງຄົມ ຂອງທ້ອງຖິ່ນບ່ອນທີ່ເຂດເສດຖະກິດພິເສດຕັ້ງຢູ່, ສົ່ງເສີມການມີສ່ວນຮ່ວມ, ຄວາມຮັບຜິດຊອບ, ຄວາມເປັນເຈົ້າການ ຂອງທຸກຂະແໜງການ ລວມທັງປະຊາຊົນ ແນໃສ່ເຮັດໃຫ້ການພັດທະນາ ເສດຖະກິດພິເສດມີກຳລັງແຮງສັງລວມ ແລະ ມີຄວາມຍືນຍົງ;

ສືບຕໍ່ປັບປຸງກົງຈັກ, ກົນໄກການບໍລິຫານຄຸ້ມຄອງ ເຂດເສດຖະກິດພິເສດ, ລະບຽບການ ແລະ ເງື່ອນໄຂອັນຈຳເປັນ, ພັດທະນາບຸກຄະລະກອນ, ຊຸກຍູ້ສົ່ງເສີມການລົງທຶນ, ເສີມຂະຫຍາຍການຮ່ວມມື ການພັດທະນາເຂດເສດຖະກິດພິເສດ ກັບບັນດາອົງການຈັດຕັ້ງສາກົນ ແລະ ບັນດາປະເທດໃນໂລກ ໂດຍສະເພາະ ກັບບັນດາປະເທດເພື່ອນບ້ານໃກ້ຄຽງຢູ່ໃນພາກພື້ນ.

ການພັດທະນາເຂດເສດຖະກິດພິເສດ ຢູ່ ສປປ ລາວ ແມ່ນຮູບແບບໜຶ່ງ ຂອງການພັດທະນາ ເສດຖະກິດ ຕາມແນວທາງນະໂຍບາຍຂອງພັກ ແລະ ແຜນພັດທະນາເສດຖະກິດ - ສັງຄົມແຫ່ງຊາດ ທີ່ກຳນົດໄວ້ໃນແຕ່ລະໄລຍະ. ການພັດທະນາ ເຂດເສດຖະກິດພິສດ ຢູ່ ສປປ ລາວ ມີຄຸນລັກສະນະ ແລະ ຈຸດພິເສດທີ່ແຕກຕ່າງກັບການພັດທະນາ ແລະ ຄຸ້ມຄອງເຂດເສດຖະກິດ ຢູ່ບັນດາປະເທດອື່ນໆ ເນື່ອງຈາກວ່າປະເທດເຮົາບໍ່ມີຊາຍແດນຕິດຈອດກັບທະເລ ແລະ ງົບປະມານໃນການພັດທະນາພື້ນຖານໂຄງລ່າງເພື່ອຮອງຮັບການລົງທຶນມີຈຳນວນຈຳກັດ.

ດັ່ງນັ້ນ, ລັດຖະບານຈຶ່ງໄດ້ສົ່ງເສີມໃຫ້ຜູ້ພັດທະນາເອກກະຊົນທັງພາຍໃນ ແລະ ຕ່າງປະເທດ ເຂົ້າມາລົງທຶນ ໂດຍໃຫ້ນະໂຍບາຍສົ່ງເສີມພິເສດ ທີ່ແຕກຕ່າງກັບການລົງທຶນທົ່ວໄປ, ອຳນວຍຄວາມສະດວກໃນການ ລົງທຶນ ແລະ ການດຳເນີນທຸລະກິດໃຫ້ມີຄວາມສະດວກ, ວ່ອງໄວ, ໂປ່ງໃສ ແລະ ກວດສອບໄດ້. ການພັດທະນາ ແລະ ຄຸ້ມຄອງ ເຂດເສດຖະກິດພິເສດ ຢູ່ ສປປລາວ  ໃນໄລຍະຜ່ານມາແມ່ນມີຄວາມແຕກຕ່າງກັນ ຄືໃນປີ 2003 ລັດຖະບານ ໄດ້ສ້າງຕັ້ງເຂດເສດຖະກິດພິເສດ ສະຫວັນ - ເຊໂນ ຂຶ້ນເປັນ ແຫ່ງທຳອິດ ເພື່ອດຶງດູດການລົງທຶນ ແລະ ສ້າງໃຫ້ເປັນເຂດອຸດສາຫະກຳ, ການຄ້າ, ການບໍລິການ ຈົນຮອດ ປີ 2010 ລັດຖະບານ ຈຶ່ງໄດ້ພິຈາລະນາຍົກລະດັບໂຄງການລົງທຶນທົ່ວໄປຈຳນວນໜຶ່ງຂຶ້ນເປັນ ເຂດເສດຖະກິດພິເສດ ໂດຍແມ່ນ ຂະແໜງການທີ່ກ່ຽວຂ້ອງທັງສູນກາງ ແລະ ທ້ອງຖິ່ນ ເປັນຜູ້ບໍລິຫານ ແລະ ຄຸ້ມຄອງ ເຊັ່ນ: ເຂດເສດຖະກິດພິເສດ ສະຫວັນ-ເຊໂນ ຂຶ້ນກັບສຳນັກງານນາຍກລັດຖະມົນຕີ, ເຂດເສດຖະກິດພິເສດ ສາມຫລ່ຽມຄຳ ແລະ ເຂດ ເສດຖະກິດສະເພາະ ບໍ່ເຕນແດນຄຳ ຂຶ້ນກັບກະຊວງແຜນການ ແລະ ການລົງທຶນ ສ່ວນເຂດນິຄົມອຸດສາຫະກຳ ການຄ້າວຽງຈັນ -ໂນນທອງຂຶ້ນກັບກະຊວງອຸດສາຫະກຳ ແລະ ການຄ້າ ຊຶ່ງແຕ່ລະເຂດມີດຳລັດສະເພາະ ແລະ ນະໂຍບາຍສົ່ງເສີມທີ່ແຕກຕ່າງກັນ.

ຜ່ານການຈັດຕັ້ງປະຕິບັດໃນໄລຍະຜ່ານມາ ເຫັນວ່າການພັດທະນາເຂດເສດຖະກິດພິເສດ ໃນໄລຍະນັ້ນ ຍັງພົບຫຼາຍບັນຫາທີ່ຫຍຸ້ງຍາກ ແລະ ບໍ່ທັນສາມາດດຶງດູດການລົງທຶນໄດ້ດີເທົ່າທີ່ຄວນເພາະການ ອະນຸມັດການລົງທຶນ ແລະ ດຳເນີນທຸລະກິດ ຍັງປະຕິບັດຕາມກົນໄກການລົງທຶນແບບທົ່ວໄປ ແລະ ຜ່ານຫຼາຍຂັ້ນຫຼາຍຂອດ. ມາຮອດປັດຈຸບັນເຂດດັ່ງກ່າວແມ່ນໄດ້ມີການພັດທະນາ ແລະ ມີຄວາມປະສົມຜົນສຳເລັດໃນລະດັບທີ່ດີຫຼາຍ ເຊິ່ງສາມາດດຶງດູດນັກລົງທຶງທຶນ ທັງພາຍໃນ ແລະ ຕ່າງປະເທດໄປລົງທຶນໃນເຂດດັ່ງກ່າວ ຫຼາຍຂະແໜງການເຊັ່ນ: ເຂດອຸດສະຫະກຳ ແລະ ການຄ້າ, ເຂດທີ່ຢູ່ອາໄສ. ນອກຈາກນີ້, ນັກລົງທຶນທີ່ລົງທຶນໃນເຂດນີ້ ຍັງໄດ້ຮັບສິດທີ່ພິເສດ ແລະ ນະໂຍບາຍຫຼຸດຜ່ອນພາສີ, ອາກອນຈາກເຂດດັ່ງກ່າວ.

ການພັດທະນາເຂດເສດຖະກິດພິເສດ ໂດຍແມ່ນລັດຖະບານເປັນຜູ້ລົງທຶນເອງ 100% ນັ້ນ ໝາຍເຖິງ ການພັດທະນາ, ການຄຸ້ມຄອງ ແລະບໍລິຫານ ແມ່ນລັດເປັນຜູ້ຮັບຜິດຊອບຮ້ອຍສ່ວນຮ້ອຍ.  ເປັນຕົ້ນແມ່ນງົບປະມານ ແລະ ການບໍລິຫານຈັດການຕ່າງໆ, ໃນການພັດທະນານັ້ນ ແມ່ນປະຕິບັດຕາມແຜນການພັດທະນາ ແລະ ເງື່ອນໄຂຂອງການສ້າງຕັ້ງເຂດເສດຖະກິດພິເສດຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ  ແລະ ລະບຽບການທີ່ກ່ຽວຂ້ອງ, ຮັບປະກັນການພັດທະນາແບບຍືນຍົງ, ປົກປັກຮັກສາສິ່ງແວດລ້ອມ, ສົ່ງເສີມ ແລະ ອະນຸລັກວັດທະນາທຳອັນດີງາມຂອງຊາດ, ມີການປະສານສົມທົບກັບອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ແລະ ປະຕິບັດຕາມແຜນການພັດທະນາຂອງລັດຖະບານ, ແຂວງ ຫຼື ນະຄອນ. ຮັບປະກັນຄວາມໝັ້ນຄົງ, ຄວາມສະຫງົບ, ຄວາມປອດໄພ, ຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມພາຍໃນເຂດເສດຖະກິດ ແລະ ແຂວງ, ນະຄອນຫຼວງ ບ່ອນເຂດເສດຖະກິດພິເສດຕັ້ງຢູ່.

ຄືດັ່ງທີ່ໄດ້ກ່າວໄວ້ໃນບົດຮຽນທີ່ຜ່ານມາ, ເຂດເສດຖະກິດພິເສດ ແມ່ນເຂດທີ່ມີກົນໄກຄຸ້ມຄອງບໍລິຫານສະເພາະ ເພື່ອສ້າງເງື່ອນໄຂໃຫ້ແກ່ການດຶງດູດການລົງທຶນທີ່ນຳໃຊ້ເຕັກໂນໂລຊີສູງ, ນຳໃຊ້ນະວັດຕະກຳ ໃນການຜະລິດເປັນສິນຄ້າ, ການຜະລິດກະສິກຳສະອາດ, ປະຢັດຊັບພະຍາກອນທຳມະຊາດ ແລະ ພະລັງງານ, ເພື່ອພັດທະນາແບບຍືນຍົງ, ເປັນມິດກັບສິ່ງແວດລ້ອມ.

ເຂດເສດຖະກິດພິເສດ ຖືກສ້າງຕັ້ງຂຶ້ນຕາມການຕົກລົງຂອງລັດຖະບານ ປະກອບມີ ນິຄົມອຸດສະຫະກຳ, ການອຸດສະຫະກຳປຸງແຕ່ງເພື່ອສົ່ງອອກ, ການພັດທະນາເຕັກໂນໂລຊີ ແລະ ຂໍ້ມູນຂ່າວສານ, ການບໍລິການການຄ້າ ແລະການທ່ອງທ່ຽວ, ການຄຸ້ມຄອງບໍລິຫານຕາມກົນໄກ ການບໍລິການ ການລົງທຶນປະຕູດຽວ ວ່ອງໄວ ໂປ່ງໃສ. ຊຶ່ງແມ່ນລັດຖະບານ ເປັນຜູ້ຮັບຜິດຊອບໃນການຄຸ້ມຄອງ ຢ່າງ ລວມສູນ ແລະ ເປັນເອກະພາບ ໃນຂອບເຂດທົ່ວປະເທດ ໂດຍມອບໃຫ້ກະຊວງແຜນການ ແລະ ການລົງທຶນ ຮັບຜິດຊອບໂດຍກົງ ແລະ ເປັນເຈົ້າການສົມທົບກັບຂະແໜງການອື່ນ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ.

ອົງການຄຸ້ມຄອງວຽກງານເຂດເສດຖະກິດພິເສດ ປະກອບດ້ວຍ: ກະຊວງແຜນການ ແລະ ການລົງທຶນ; ອົງການປົກຄອງແຂວງ, ນະຄອນ; ຫ້ອງການສົ່ງເສີມ ແລະ ຄຸ້ມຄອງເຂດເສດຖະກິດພິເສດ ແລະ ຄະນະຄຸ້ມຄອງເຂດ.

ແນວໃດກໍ່ຕາມ, ຂັ້ນຕອນ ແລະ ວິທີການພັດທະນາເຂດເສດຖະກິດພິເສດນັ້ນ ຜູ້ພັດທະນາຈະຕ້ອງໄດ້ປະຕິບັດຕາມກົດ ໝາຍ ແລະ ລະບຽບການສະເພາະໃນການລົງທຶນຂອງລັດຖະບານ. ລັດຖະບານ ອາດຈະເຮັດສັນຍາກັບພາກເອກະຊົນ ໃນການພັດທະນາພື້ນຖານໂຄງລ່າງ ຫຼື ລັດຖະບານ ພັດທະນາພື້ນຖານໂຄງລ່າງພາຍໃຕ້ສັນຍາລົງທຶນຮ່ວມກັບພາກເອກະຊົນ ເພື່ອຈັດຕັ້ງປະຕິບັດໂຄງການກໍ່ສ້າງໃໝ່, ເນື່ອງຈາກວ່າການພັດທະນາພື້ນຖານໂຄງລ່າງນັ້ນຕ້ອງໄດ້ນຳໃຊ້ທຶນຮອນ, ກົນຈັກ ແລະ ເຕັກໂນໂລຊີທີ່ທັນສະໄໝ ຊຶ່ງມີຄວາມຈຳເປັນຕ້ອງໄດ້ມີການຮ່ວມມືກັບພາກເອກະຊົນເພື່ອເຮັດໃຫ້ການຈັດຕັ້ງປະຕິບັດແຜນການພັດທະນາພື້ນຖານໂຄງລ່າງສຳເລັດຕາມແຜນທີ່ໄດ້ກຳນົດໄວ້, ຊຶ່ງລັດຖະບານຈະໃຫ້ບູລິມະສິດ ຫຼື ນະໂຍບາຍຕ່າງໆແກ່ພາກເອກະຊົນ ຫຼື ນິຕິບຸກຄົນຕາມສັນຍາທີ່ໄດ້ມີການຕົກລົງກັນ.

ໃນການພັດທະນາເຂດເສດຖະກິດພິເສດ ຊຶ່ງລັດຖະບານເປັນຜູ້ລົງທຶນພັດທະນາເອງນັ້ນ ໂດຍສະເພາະ ປະເທດດ້ອຍພັດທະນາ ຫຼື ກຳລັງພັດທະນາ ຍັງພົບກັບຄວາມຫຍຸ້ງຍາກຫຼາຍດ້ານ ເປັນຕົ້ນ ແມ່ນທາງດ້ານທຶນຮອນ, ເຕັກໂນໂລຊີ, ບຸກຄະລະກອນ, ແລະ ປະສົບການໃນການພັດທະນາຍັງມີຂີດຈຳກັດ. ສະນັ້ນ, ຫຼາຍປະເທດຈຶ່ງໄດ້ມີການເປີດໂອກາດໃຫ້ພາກເອກະຊົນເປັນຜູ້ລົງທຶນພັດທະນາ ຫຼື ລົງທຶນພັດທະນາຮ່ວມກັບພາກເອກກະຊົນ, ການພັດທະນາໃນຮູບການນີ້ຈະເຮັດໃຫ້ເຂດເສດຖະກິດພິເສດມີປະສິດທິພາບ ແລະ ໄດ້ຮັບປະສິດທິຜົນສູງ. ສະເພາະການບໍລິຫານຄຸ້ມຂອງນັ້ນ ລັດຕ້ອງໄດ້ໃຫ້ຄວາມສຳຄັນ ແລະ ປັບປຸງລະບຽບຫຼັກການ, ປັບປຸງກົນໄກ ແລະ ກົດໝາຍໃຫ້ມີຄວາມສອດຄ່ອງ ເພື່ອຮັບປະກັນໃຫ້ການສ້າງຕັ້ງເຂດດັ່ງກ່າວເປັນໄປຕາມຈຸດປະສົງ ແລະ ເປົ້າໝາຍທີ່ກຳນົດໄວ້, ຮັບປະກັນໃຫ້ເກີດຜົນປະໂຫຍດສູງສຸດແກ່ປະເທດຊາດ, ຕໍ່ປະຊາຊົນ, ຜູ້ພັດທະນາ ແລະ ຜູ້ລົງທຶນໃນເຂດດັ່ງກ່າວ.

ສັງເກດເຫັນວ່າ ການພັດທະນາເຂດເສດຖະກິດພິເສດ ໂດຍທີ່ລັດຖະບານເປັນຜູ້ລົງທຶນເອງທັງໝົດນັ້ນ ມີແນວໂນ້ມທີ່ຈະຫຼຸດລົງໃນປະເທດດ້ອຍພັດທະນາ. ໃນຂະນະດຽວກັນລັດຖະບານຈະຫັນໄປໃຫ້ຄວາມສຳຄັນໃນການປັບປຸງ ແລະ ພັດທະນາລະບົບກົດໝາຍ ໃນການຄຸ້ມຄອງໃຫ້ຫຼາຍຂຶ້ນ ເພື່ອຮັບປະກັນໃຫ້ການສ້າງຕັ້ງເຂດເສດຖະກິດພິເສດມີປະສິດທິພາບທີ່ດີຂຶ້ນ. ນອກຈາກນີ້, ລັດຈະເປີດໂອກາດໃຫ້ພາກເອກະຊົນລົງທຶນພັດທະນາຮ່ວມກັນໂດຍມີການຕົກລົງກ່ຽວກັບສິດ ແລະ ພັນທະຂອງຄູ່ຮ່ວມກັນ.

ການເພີ່ມຂຶ້ນຂອງຜູ້ພັດທະນາພາກເອກະຊົນ ຫຼື ການທີ່ລັດຖະບານອະນຸຍາດໃຫ້ຜູ້ພັດທະນາພາກເອກະຊົນໄດ້ລົງທຶນພັດທະນາເອງຮ້ອຍສ່ວນຮ້ອຍນັ້ນ ແມ່ນມີຈຸດດີໃນການພັດທະນາພື້ນຖານໂຄງລ່າງ ແລະ ລະບົບເສດຖະກິດຂອງປະເທດ ຊຶ່ງເປັນການແບ່ງເບົາພາລະ ແລະ ງົບປະມານຂອງລັດຖະບານ. ເຮັດໃຫ້ວຽກງານການພັດທະນາພື້ນຖານໂຄງລ່າງມີຄວາມຄືບໜ້າໃນລະດັບທີໄວຂຶ້ນ. ຊຶ່ງເຮັດໃຫ້ລັດຖະບານໄດ້ມີເວລາສຸມໃສ່ວຽກງານສໍາຄັນອື່ນໆ ເຊັ່ນ: ນະໂຍບາຍທາງດ້ານການສຶກສາ, ສຸຂະພາບ ຫຼື ປັບປຸງລະບົບກົດໝາຍ ແລະ ສ້າງກົນໄກໃນການຄຸ້ມຄອງເຂດດັ່ງກ່າວ.

## 2. ກົນໄກໃນການຄຸ້ມຄອງ ແລະ ພັດທະນາເຂດເສດຖະກິດພິເສດ

ການພັດທະນາ ແລະ ການຄຸ້ມຄອງເຂດເສດຖະກິດພິເສດ ໃນແຕ່ລະປະເທດນັ້ນ ແມ່ນມີຄວາມແຕກຕ່າງກັນເນື່ອງຈາກວ່າລະລະບົບການປົກຄອງ ແລະ ກົນໄກໃນການຄຸ້ມຄອງກໍ່ມີການພັດທະນາ ແບະ ປັບປຸງໃຫ້ສອດຄ່ອງກັບສະພາບຄວາມເປັນຈິງຂອງປະເທດໃນແຕ່ລະໄລຍະ. ສະເພາະ ການພັດທະນາ ແລະ ການຄຸ້ມຄອງ ຢູ່ ສປປລາວ ກໍ່ຈະມີການແບ່ງຄວາມຮັບຜິດຊອບໄວ້ຢ່າງລະອຽດ. ໃນການພັດທະນາເຂດເສດຖະກິດພິເສດ ແມ່ຫ້ອງການສົ່ງເສີມ ແລະ ຄຸ້ມຄອງເຂດເສດຖະກິດພິເສດ ເປັນຜູ້ຮັບຜິດຊອບໃນການຄຸ້ມຄອງ ແລະ ການພັດທະນາເຂດ,ໃນຫ້ອງການດັ່ງກ່າວນີ້ ປະກອບມີ 1). ພະແນກສັງລວມ; 2) ພະແນກຈັດຕັ້ງ ແລະ ກວດກາ; 3) ພະແນກ ນິຕິກໍາ; 4) ພະແນກ ແຜນການ ແລະ ປະເມີນຜົນ; ພະແນກສົ່ງເສີມ ແລະ ຮ່ວມມື; ພະແນກທີ່ດິນ ແລະ ສິ່ງແວດລ້ອມ; ແລະ ພະແນກແຮງງານ. ນອກຈາກນີ້, ຍັງມີຄະນະຄຸ້ມຄອງເສດຖະກິດພິເສດ ຊຶ່ງມີຖານະທຽບເທົ່າພະແນກຂັ້ນແຂວງ ແລະ ມີບັນດາກົງຈັກຊ່ວຍວຽກຊຶ່ງມີຂໍ້ຕົກລົງກໍານົດໄວ້ສະເພາະ.

ໃນບັນດາພະແນກທີໄດ້ກ່າວມາຂ້າງເທິງນີ້, ລ້ວນແລ້ວແຕ່ມີພາລະບົດບາດສໍາຄັນໃນການປະກອບສ່ວນເຂົ້າໃນການພັດທະນາ ແລະ ຄຸ້ມຄອງ ເຂດເສດຖະກິດພິເສດ ຢູ່ ສປປລາວ ເຊັ່ນ: ພະແນນແຜນການ ແລະ ປະເມີນຜົນມີໜ້າທີ່ໃນການຄົ້ນ ຄ້ວາ, ສ້າງວິໄສທັດ ແລະ ແຜນຍຸດທະສາດການສົ່ງເສີມ ແລະ ຄຸ້ມຄອງເຂດເສດຖະກິດພິເສດໃນຂອບເຂດທົ່ວປະເທດ ໃນແຕ່ລະໄລຍະ ເພື່ອສະເໜີຂັ້ນເທິງພິຈາລະນາ; ສ້າງແຜນການເຄື່ອນໄຫວວຽກງານຂອງຫ້ອງການສົ່ງເສີມ ແລະ ຄຸ້ມຄອງເຂດເສດຖະກິດພິເສດ ໃນແຕ່ລະໄລຍະ; ເປັນເຈົ້າການປະສານສົມທົບກັບບັນດາພະແນກພາຍໃນ ຫ້ອງການສົ່ງເສີມ ແລະ ຄຸ້ມຄອງເຂດເສດຖະກິດພິເສດ ແລະ ຂະແໜງການທີ່ກ່ຽວຂ້ອງເພື່ອສ້າງ, ຄຸ້ມຄອງ, ປັບປຸງລະບົບ ແລະ ການຈັດຕັ້ງປະຕິບັດວຽກງານບໍລິການການລົງທຶນປະຕູດຽວ ຂອງເຂດເສດຖະກິດພິເສດ; ເປັນເຈົ້າການປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ເພື່ອສ້າງ, ຄຸ້ມຄອງ, ປັບປຸງລະບົບ ແລະ ການຈັດຕັ້ງ ປະຕິບັດວຽກງານບໍລິການການລົງທຶນປະຕູດຽວ ຂອງເຂດເສດຖະກິດພິເສດ; ເປັນເຈົ້າການປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ເພື່ອຄົ້ນຄ້ວາ, ວິໄຈເອກະສານສະເໜີຂໍສ້າງຕັ້ງເຂດເສດຖະກິດພິເສດ ແລະ ຂໍລົງທຶນໃນກິດຈະການທີ່ຕ້ອງຂໍອະນຸມັດຈາກ ຄະນະສົ່ງເສີມ ແລະ ຄຸ້ມຄອງການລົງທຶນຂັ້ນສູນກາງ ເພື່ອສະເໜີຂໍອະນຸມັດຕາມລະບຽບການ ພ້ອມທັງສົມທົບກັບພະແນກນິຕິກໍາ ກວດກາ ແລະ ເຊັນກໍາກັບຄວາມຖືກຕ້ອງທາງດ້ານເນື້ອໃນ, ບົດບັນທຶກຄວາມເຂົ້າໃຈ, ສັນຍາພັດທະນາເຂດ ຫຼື ສັນຍາສໍາປະທານ ກ່ອນນໍາສະເໜີຂັ້ນເທິງພິຈາລະນາອະນຸມັດ; ຄົ້ນຄ້ວາ ຄໍາຮ້ອງ, ຂໍນໍາສະເໜີຕ່າງໆ ຂອງຄະນະຄຸ້ມຄອງ ເຂດເສດຖະກິດພິເສດ, ຜູ້ພັດທະນາ ແລະ ຜູ້ລົງທຶນ ໃນໜ້າວຽກທີຮັບຜິດຊອບ ຂອງພະແນກແຜນການ ແລະ ປະເມີນຜົນ; ເກັບກໍາ, ສັງລວມຂໍ້ມູນຕ່າງໆກ່ຽວກັບການສ້າງຕັ້ງ, ການພັດທະນາ, ການລົງທຶນ, ການປະຕິບັດພັນທະພາສີ, ອາກອນ ແລະ ຂໍ້ມູນອື່ນໆທີ່ກ່ຽວກັບການບໍລິການການລົງທຶນປະຕູດຽວ ຂອງເຂດເສດຖະກິດພິເສດ ໃນແຕ່ລະໄລຍະເຂົ້າໃນລະບົບຖານຂໍ້ມູນລວມ ດ້ວຍລະບົບອີເລັກໂຕນິກ ແລະ ສະໜອງຂໍ້ມູນຂ່າວສານໃຫ້ການຈັດຕັ້ງ ແລະ ສັງຄົມ; ວິໄຈຂໍ້ມູນ, ສັງລວມ ແລະ ປະເມີນສະພາບການພັດທະນາ ແລະ ການລົງທຶນ ໃນເຂດເສດຖະກິດພິເສດ ເປັນແຕ່ລະໄລຍະ ເພື່ອລາຍງານຕໍ່ການຈັດຕັ້ງຢ່າງເປັນປົກກະຕິ; ປະສານສົມທົບກັຍພາກສ່ວນທີ່ກ່ຽວຂ້ອງ ໃນການເກັບກໍາສະຖິຕິ ການ

ລົງທຶນຂອງເຂດເສດຖະກິດພິເສດ; ຄົ້ນຄ້ວາ, ເຂົ້າຮ່ວມການຜ່ານແບບ, ການປະມູນ ແລະ ຕິດຕາມການພັດທະນາພື້ນຖານໂຄງລ່າງ (ໄຟຟ້າ, ນໍ້າປະປາ, ອາຄານ, ເສັ້ນທາງ, ລະບົບໂທລະຄົມມະນາຄົມ...) ຂອງເຂດເສດຖະກິດພິເສດ ແລະ ເຂດເຊື່ອມຕໍ່; ສະຫຼຸບ, ສັງລວມການເຄື່ອນໄຫວວຽກງານໃນແຕ່ລະໄລຍະ ຂອງຫ້ອງການສົ່ງເສີມ ແລະ ຄຸ້ມຄອງເສດຖະກິດພິເສດ ເພື່ອລາຍງານຂັ້ນເທິງ.

ນອກຈາກນີ້, ພະແນກທີ່ດິນ ແລະ ສິ່ງແວດລ້ອມ ກໍມີບົດບາດສໍາຄັນໃນການພັດທະນາເຂດເສດຖະກິດພິເສດ, ເຊັ່ນ: ເປັນເຈົ້າການໃນການຜັນຂະຫຍາຍກົດໝາຍ, ດໍາລັດ, ນິຕິກໍາກຽວກັບທີ່ດິນ, ສິ່ງແວດລ້ອມ ເພື່ອຈັດຕັ້ງປະຕິບັດຢູ່ໃນເຂດເສດຖະກິດພິເສດ; ສົມທົບກັບຂະແໜງການທີ່ກ່ຽວຂ້ອງຂອງຂັ້ນສູນກາງ ແລະ ທ້ອງຖິ່ນ ເພື່ອສຶກສາທ່າແຮງບົ່ມຊ້ອນທາງດ້ານທີຕັ້ງ ແລະ ພູມສັນຖານ ໃນການກໍານົດຂອບເຂດເນື້ອທີ່ດິນ, ແຕ້ມແຜນວາດທີ່ດິນເບື້ອງຕົ້ນບ່ອນທີຈະພັດທະນາເຂດເສດຖະກິດພິເສດ ເພື່ອນໍາສະເໜີຂັ້ນເທິງ; ເຂົ້າຮ່ວມໃນການສຶກສາ, ຄົ້ນຄ້ວາ ປະກອບຄໍາເຫັນກ່ຽວກັບ ການແກ້ໄຂບັນຫາທີ່ດິນ, ສິ່ງປຸກສ້າງຜົນລະປູກ ແລະ ອື່ນໆ ທີ່ໄດ້ຮັບຜົນກະທົບຈາກການພັດທະນາເຂດເສດຖະກິດພິເສດ; ດໍາເນີນການສໍາຫຼວດເນື້ອທີດິນ, ປັກຫຼັກເຂດແດນ ແລະ ຊຸກຍູ້ຕິດຕາມການອອກໃບຕາດິນ ແລະ ສິດນໍາໃຊ້ທີດິນ ໃຫ້ແກ່ຜູ້ພັດທະນາເຂດເສດຖະກິດພິເສດ ໂດຍປະສານສົມທົບກັບຂະໜງການທີ່ກ່ຽວຂ້ອງ; ເປັນເຈົ້າການໃນການປະສານສົມທົບກັບຂະແໜງການ ແລະ ທ້ອງຖິ່ນທີກ່ຽວຂ້ອງ ເພື່ອຄົ້ນຄ້ວາການສະເໜີຂໍຍ້ານທີດິນ, ການດັດແກ້, ການບຸກເບີກເນື້ອທີດິນ ເພື່ອພັດທະນາເຂດເສດຖະກິດພິເສດ; ຕິດຕາມ, ຊຸກຍູ້. ກວດກາເນື້ອທີດິນໃຫ້ເຊົ່າຕໍ່, ການອອກໃບອະນຸຍາດສິດນໍາໃຊ້ທີດິນ ທີ່ຄະນະຄຸ້ມຄອງເຂດເສດຖະກິດພິເສດ ອອກໃຫ້ບັນດາຫົວໜ່ວຍທຸລະກິດ ທີ່ລົງທຶນໃນເຂດເສດຖະກິດພິເສດ; ຕິດຕາມ, ກວດກາ ແລະ ແນະນໍາການນໍາໃຊ້ທີດິນໃຫ້ຖືກກັບເປົ້າໝາຍທີ່ໄດ້ກໍານົດໄວໃນສັນຍາ ແລະ ແຜນແມ່ບົດການພັດທະນາເຂດເສດຖະກິດພິເສດ; ຕິດຕາມ, ກວດກາ, ການມອບພັນທະຄ່າເຊົ່າ, ຄ່າສໍາປະທານທີດິນ ແລະ ຄ່າທໍານຽມການອອກໃບອະນຸຍາດນໍາໃຊ້ທີດິນ ໃນເຂດເສດຖະກິດພິເສດ ທີອອກໃຫ້ຫົວໜ່ວຍທຸລະກິດ ຢ່າງເປັນປົກກະຕິ ເພື່ອມອບພັນທະເຂົ້າງົບປະມານຂອງລັດຕາມລະບຽບການ; ເປັນເຈົ້າການຄົ້ນຄ້ວາ ແລະ ເຂົ້າຮ່ວມ ຜ່ານບົດປະເມີນຜົນກະທົບຕໍ່ສິ່ງແວດລ້ອມ ສັງຄົມ ແລະ ທໍາມະຊາດ ແລະ ບົດປະເມີນຜົນກະທົບຕໍ່ສຸຂະພາບ ກ່ຽວກັບການສະເໜີຂໍສ້າງຕັ້ງເຂດເສດຖະກິດພິເສດໃໝ່ ແລະ ເຂດເສດຖະກິດພິເສດທີ່ສ້າງຕັ້ງຂຶ້ນມາແລ້ວ ລວມທັງບໍລິສັດທີ່ລົງທຶນໃນເຂດເສດຖະກິດພິເສດ ໃຫ້ຖືກຕ້ອງຕາມຂັ້ນຕອນ ແລະ ລະບຽບການທີ່ກ່ຽວຂ້ອງ; ປະສານສົມທົບກັບຄະນະຄຸ້ມຄອງເຂດເສດຖະກິດພິເສດ ແລະ ພາກສ່ວນທີກ່ຽວຂ້ອງ ເພື່ອຕິດຕາມກວດກາ ການຈັດຕັ້ງປະຕິບັດແຜນການຄຸ້ມຄອງສິ່ງແວດລ້ອມ ສັງຄົມ-ທໍາມະຊາດ ແລະ ສຸຂະພາບ ເປັນແຕ່ລະໄລຍະ; ຄົ້ນຄ້ວານໍາສະເໜີຂັ້ນເທິງພິຈາລະນາປັບປຸງ, ດັດແກ້, ກ່າວເຕືອນ ຫຼື ນໍາໃຊ້ມາດຕະການຕໍ່ບັນດານິຕິບຸກຄົນໃນ ເຂດເສດຖະກິດພິເສດ ທີ່ລະເມີດແຜນການຄຸ້ມຄອງ ສິ່ງແວດລ້ອມ ສັງຄົມ-ທໍາມະຊາດ ແລະ ສຸຂະພາບ ທີ່ໄດ້ຮັບຮອບໄປແລ້ວ; ສະຫຼຸບ, ສັງລວມການຈັດຕັ້ງປະຕິບັດວຽກງານປະຈໍາອາທິດ, ເດືອນ, ຫົກເດືອນ ແລະ ປະຈໍາປີຂອງພະແນກທີ່ດິນ ແລະ ສິ່ງແວດລ້ອມສົ່ງໃຫ້ພະແນກແຜນການ ແລະ ປະເມີນຜົນ ເພື່ອສັງລວມລາຍງານຂັ້ນເທິງ[1].

ສະຫຼຸບແລ້ວ ການພັດທະນາເຂດເສດຖະກິດພິເສດ ທີລັດເປັນຜູ້ລົງທຶນພັດທະນານັ້ນ ແມ່ນການປະຕິບັດຕາມແຜນການພັດທະນາເສດຖະກິດສັງຄົມຂອງລັດແຕ່ລະໄລຍະ, ຊຶ່ງລັດຖະບານເປັນຜູ້ຮັບຜິດຊອບໃນການພັດທະນາພື້ນຖານໂຄງລ່າງ ແລະ ສິ່ງອໍານວຍຄວາມສະດວກຕ່າງໆພາຍໃນເຂດ ເພື່ອດຶງດູດການລົງທຶນ ຈາກນັກລົງທຶນພາຍໃນ ແລະຕ່າງປະເທດດ້ວຍຮູບການການໃຫ້ສິດທິພິເສດໃນການນໍາໃຊ້ທີ່ດິນ ແລະ ນະໂຍບາຍຫຼຸດຜ່ອນພາສີ

[1] ຂໍ້ຕົກລົງວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງຫ້ອງການສົ່ງເສີມ ແລະ ຄຸ້ມຄອງເຂດເສດຖະກິດພິເສດ, ເລກທີ 1970/ກຜທ, ວັນທີ 15 ສິງຫາ 2018

ອາກອນ ເພື່ອເປັນສິ່ງຈູງໃຈ. ໃນການພັດທະນາເຂດນັ້ນ, ລັດຖະບານຈະຕ້ອງໄດ້ປະຕິບັດຕາມກົດໝາຍ, ລະບຽບການ, ເງື່ອນໄຂ ແລະ ກົນໄກການເຄື່ອນໄຫວ ແລະ ການຄຸ້ມຄອງເຂດເສດຖະກິດພິເສດ.

**ເອກະສານອ້າງອີງ**

1. ຂໍ້ຕົກລົງວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງຫ້ອງການສົ່ງເສີມ ແລະ ຄຸ້ມຄອງເຂດເສດຖະກິດພິເສດ, ເລກທີ 1970/ກຜທ, ວັນທີ 15 ສິງຫາ 2018.